ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ: 10 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ: 10 ມັງກອນ 2018

# ແຈ້ງການ

**ເຖິງ:** ຜູ້ອໍານວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ການຈ່າຍເງິນປັນຜົນຂອງທະນາຄານທຸລະກິດ ແລະ ການໂອນກໍາໄລຂອງສາຂາທະນາຄານທຸລະກິດຕ່າງປະເທດ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການດັດແກ້ກົດໝາຍ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015,

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການຈັດຕັ້ງປະຕິບັດການຈ່າຍເງິນປັນຜົນຂອງທະນາຄານທຸລະກິດ ແລະ ການໂອນກໍາໄລຂອງສາຂາທະນາຄານທຸລະກິດຕ່າງປະເທດໃຫ້ສໍານັກງານໃຫຍ່ ໃຫ້ປະຕິບັດດັ່ງນີ້:

1. ກ່ອນການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຂອງທະນາຄານທຸລະກິດ ບໍ່ວ່າຜູ້ຖືຮຸ້ນຈະຕັ້ງຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ແລະ ການໂອນກໍາໄລໃຫ້ສໍານັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງປະຕິບັດດັ່ງນີ້:
   - 1.1 ປະຕິບັດພັນທະດ້ານອາກອນ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ແລະ ຕ້ອງຫັກກໍາໄລສຸດທິເພື່ອສ້າງຄັງສະສົມຕາມລະບຽບການ 10% ແລະ ຄັງອື່ນໆ ຕາມລະບຽບກົດໝາຍກໍານົດໄວ້;
   - 1.2 ຫ້າມຈ່າຍເງິນປັນຜົນ ຫຼື ໂອນກໍາໄລໃນກໍລະນີທີ່ທະນາຄານມີຂາດທຶນສະສົມ.
2. ໃນກໍລະນີທີ່ກົມສ່ວຍສາອາກອນບໍ່ທັນມາໄລ່ລຽງອາກອນຕາມກໍານົດເວລາ, ການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຂອງທະນາຄານທຸລະກິດ ຫຼື ການໂອນກໍາໄລໃຫ້ສໍານັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ ສາມາດປະຕິບັດໄດ້ ແຕ່ຕ້ອງຫັກສໍາຮອງໄວ້ຢ່າງໜ້ອຍ 5% ຂອງກໍາໄລກ່ອນເສຍອາກອນ ເພື່ອຮອງຮັບການໄລ່ລຽງອາກອນ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

3. ພາຍຫຼັງການໄລ່ລຽງອາກອນຂອງເຈົ້າໜ້າທີ່ອາກອນ, ໃນກໍລະນີທີ່ຕ້ອງເສຍເພີ່ມ ແມ່ນໃຫ້ນໍາເອົາກໍາໄລທີ່ໄດ້ຫັກສໍາຮອງໄວ້ 5% ມາຊໍາລະ, ສ່ວນທີ່ເຫຼືອຈາກການຊໍາລະດັ່ງກ່າວ ແມ່ນສາມາດແບ່ງປັນໃຫ້ຜູ້ຖືຮຸ້ນ ຫຼື ໂອນໃຫ້ສໍານັກງານໃຫຍ່ໄດ້.

ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການເລກທີ 508/ກຄທສ, ລົງວັນທີ 02 ຕຸລາ 2009.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ພຸດທະໄຊ ສີວິໄລ

3. ພາຍຫຼັງການໄລ່ລຽງອາກອນຂອງເຈົ້າໜ້າທີ່ອາກອນ, ໃນກໍລະນີທີ່ຕ້ອງເສຍເພີ່ມ ແມ່ນໃຫ້ນໍາເອົາກໍາໄລທີ່ໄດ້ຫັກສໍາຮອງໄວ້ 5% ມາຊໍາລະ, ສ່ວນທີ່ເຫຼືອຈາກການຊໍາລະດັ່ງກ່າວ ແມ່ນສາມາດແບ່ງປັນໃຫ້ຜູ້ຖືຮຸ້ນ ຫຼື ໂອນໃຫ້ສໍານັກງານໃຫຍ່ໄດ້.

ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການເລກທີ 508/ກຄທສ, ລົງວັນທີ 02 ຕຸລາ 2009.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ທະນາຄານແຫ່ງ ສ. ປ. ປ. ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ພຸດທະໄຊ ສີວິໄລ